ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 03 ສປປ

ລົງວັນທີ 23/5/96

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການດັດແກ້ບາງອັດຕາພາສີທີ່ດິນ.

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ່ V ມາດຕາ 53, ຂໍ້ 1;

- ອີງຕາມມະຕິຕົກລົງຂອງກອງປະຊຸມ ເທື່ອທີ່ 8 ສະໄໝສາມັນ ຂອງສະພາແຫ່ງຊາດ ຊຸດທີ່ III ກ່ຽວກັບການຮັບຮອງເອົາແຜນການດັດແກ້ລາຍຮັບງົບປະມານແຫ່ງຊາດ ສຳລັບ 6 ເດືອນທ້າຍສົກ 1995-96 ລົງວັນທີ່ 25 ເມສາ 1996.

ປະທານປະເທດ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະບັນຍັດ :

<u>ມາດຕາ 1</u> : ດັດແກ້ບາງອັດຕາພາສີທີ່ດິນ ທີ່ປະກາດໃຊ້ໂດຍດຳລັດ ຂອງນາຍົກລັດຖະມົນຕີ ສະບັບ ເລກທີ່ 50/ນຍ, ລົງວັນທີ່ 13 / 03 / 1993 ຕາມຕາຕະລາງລຸ່ມນີ້ :

| ດິນປຸກສ້າງໂຮງງານ | | ດິນປຸກສ້າງຮ້ານສະຖານທີ່ບໍລິການ | |
|---|---|---|---|
| ອັດຕາເກົ່າ | ອັດຕາໃໝ່ | ອັດຕາເກົ່າ | ອັດຕາໃໝ່ |
| 4 ກີບຕໍ່ນຶ່ງຕາແມັດ | 15 ກີບຕໍ່ນຶ່ງຕາແມັດ | 10 ກີບຕໍ່ນຶ່ງຕາແມັດ | 30 ກີບຕໍ່ນຶ່ງຕາແມັດ |

ມາດຕາ 2 : ມອບໃຫ້ລັດຖະບານເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້ .

ມາດຕາ 3 : ລັດຖະບັນຍັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ່ 23 ພຶດສະພາ 1996.

ປະທານປະເທດ.

ໜູຮັກ ພູມສະຫວັນ